# ການຊ່ວຍຄົນອື່ນໆໃຫ້ເຮັດ ຕາມນ້ຳພະໄທຂອງພະຜູ້ສ້າງ

*ເປັນຫຍັງຈຶ່ງບອກຄົນອື່ນໆ ກ່ຽວກັບສິ່ງທີ່ທ່ານພວມຮຽນຮູ້? (1)*
*ທ່ານອາດແບ່ງປັນຂ່າວດີນີ້ກັບຜູ້ໃດ? (2)*
*ການປະພຶດຂອງທ່ານອາດສົ່ງຜົນກະທົບອັນໃດຕໍ່ຄົນອື່ນໆ? (2)*
*ເມື່ອໃດທ່ານຈະສາມາດຮ່ວມການເຜີຍແຜ່ກັບປະຊາຄົມໄດ້? (3)*



1. ເຖິງຕອນນີ້ ທ່ານໄດ້ຮຽນຮູ້ສິ່ງດີຫລາຍຢ່າງຈາກຄຳພີໄບເບິນ. ຄວາມຮູ້ນີ້ຄວນພາທ່ານໃຫ້ເພາະປູກບຸກຄະລິກລັກສະນະແບບຄລິດສະຕຽນ. (ເອເຟດ 4:22-24) ຄວາມຮູ້ເຊັ່ນນີ້ເປັນອົງປະກອບສຳຄັນເພື່ອທ່ານຈະໄດ້ຮັບຊີວິດຕະຫລອດໄປ. (ໂຍຮັນ 17:3) ແຕ່ ຄົນອື່ນໆ ກໍຈຳເປັນຕ້ອງໄດ້ຍິນຂ່າວດີດ້ວຍເພື່ອພວກເຂົາຈະສາມາດຮັບຄວາມລອດ. ຄລິດສະຕຽນແທ້ທຸກຄົນຕ້ອງໃຫ້ຄຳພະຍານແກ່ຄົນອື່ນ. ນີ້ເປັນຄຳສັ່ງຂອງພະເຈົ້າ.—ໂລມ 10:10; 1 ໂກລິນໂທ 9:16; 1 ຕີໂມເຕ 4:16.



2. ທ່ານສາມາດເລີ່ມຕົ້ນແບ່ງປັນສິ່ງດີໆ ທີ່ທ່ານພວມຮຽນຮູ້ແກ່ຄົນເຫລົ່ານັ້ນທີ່ໃກ້ທ່ານໄດ້. ຈົ່ງບອກສິ່ງດີໆນັ້ນແກ່ຄອບຄົວທ່ານ, ໝູ່ເພື່ອນ, ເພື່ອນຮ່ວມໂຮງຮຽນ, ແລະເພື່ອນຮ່ວມງານ. ຈົ່ງກະລຸນາແລະອົດທົນເມື່ອທ່ານເຮັດເຊັ່ນນັ້ນ. (2 ຕີໂມເຕ 2:24, 25) ແລະຈົ່ງຈົດຈຳໄວ້ວ່າຜູ້ຄົນມັກຈະສັງເກດເບິ່ງຄວາມປະພຶດຂອງເຮົາຫລາຍກວ່າຈະຟັງສິ່ງທີ່ເຂົາເວົ້າ. ດັ່ງນັ້ນ ຄວາມປະພຶດທີ່ດີຂອງທ່ານອາດຊັກຈູງຄົນອື່ນໆ ໃຫ້ຮັບຟັງຂ່າວສານທີ່ທ່ານບອກເຂົາກໍໄດ້.—ມັດທາຽ 5:16; 1 ເປໂຕ 3:1, 2, 16.

3. ຕໍ່ມາ ທ່ານອາດມີຄຸນວຸທິທີ່ຈະອອກໄປເຜີຍແຜ່ກັບປະຊາຄົມທ້ອງຖິ່ນຂອງພະຍານພະເຢໂຫວາ. ນີ້ເປັນບາດກ້າວສຳຄັນໃນຄວາມກ້າວໜ້າຂອງທ່ານ. (ມັດທາຽ 24:14) ຈະເປັນຄວາມຍິນດີສັກພຽງໃດຫາກວ່າທ່ານສາມາດຊ່ວຍອີກຄົນໜຶ່ງໃຫ້ມາເປັນຜູ້ຮັບໃຊ້ຂອງພະເຢໂຫວາແລະໃຫ້ຮັບຊີວິດນິລັນດອນ!—1 ເທຊະໂລນີກ 2:19, 20.

